ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ສິ່ງແວດລ້ອມ
ກົມກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ
ສັນຍາເລກທີ: DNEI/G07

ເລກທີ: 2860/ກກຊສ
ນະຄອນຫຼວງວຽງຈັນ,ວັນທີ: 03 SEP 2026

## ໜັງສືແຈ້ງເລື່ອນເຊີນປະມູນ

1. ກົມກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂໍເຊີນບັນດາບໍລິສັດທີ່ສົນໃຈ ແລະ ມີຄຸນນະວຸດທິເໝາະສົມ ເຂົ້າຍື່ນຊອງປະມູນ ສຳລັບສະໜອງ ການບໍລິການ ຕັດເຄື່ອງແບບເຈົ້າໜ້າທີ່ ກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໄລຍະການຈັດສົ່ງແມ່ນ 90 ວັນ;
2. ການປະມູນຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງທີ່ໄດ້ກຳນົດໄວ້ຢູ່ໃນ ກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດ ກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນນີ້ ອະນຸຍາດໃຫ້ທຸກໆບໍລິສັດ ທີ່ມີຄຸນນະວຸດທິເໝາະສົມສົນໃຈເຂົ້າຮ່ວມແຂ່ງຂັນການປະມູນ. ສາມາດຕິດຕໍ່ພົວພັນເອກະສານປະມູນໄດ້ທີ່ ກົມກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຕຶກຕະຫຼາດວັງທອງ 450 ປີ ຊັ້ນ 2, ບ້ານທົ່ງຂັນຄຳ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ໂທລະສັບ: 021 243701-2, ພະແນກສັງລວມ ຕິດຕໍ່ ທ. ບົວຄຳ ຄຳພິລາວົງ ໂທ 020 2895 3698 ໃນເວລາລັດຖະການ;
4. ເອກະສານປະມູນເລີ່ມຂາຍແຕ່ວັນທີ 30 ກໍລະກົດ 2026 ຫາວັນທີ 2 ກັນຍາ 2026, ໃນລາຄາ 500,000 ກີບ/ຊອງ, ວິທີການຊຳລະຕ້ອງຈ່າຍເປັນເງິນສົດ, ຈຳນວນເງິນດັ່ງກ່າວຈະບໍ່ມີການສົ່ງຄືນ ແລະ ຈະໄດ້ນຳໃຊ້ເຂົ້າໃນວຽກງານປະມູນ;
5. ຊອງປະມູນຕ້ອງສົ່ງກ່ອນເລື່ອນຈາກວັນທີ 2 ກັນຍາ 2026 ເວລາ 10:00 ໂມງ ມາເປັນຕ້ອງສົ່ງກ່ອນວັນທີ 16 ກັນຍາ 2026. ຊອງປະມູນທຸກໆຊອງຈະໄດເປີດໃນວັນທີ 16 ກັນຍາ 2026 ເວລາ 10:00 ໂມງ ທີ່ຫ້ອງປະຊຸມກົມກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໂດຍຊ່ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຜູ້ປະມູນທີ່ສົນໃຈເຂົ້າຮ່ວມ. ຫາກຊ່ອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ສົ່ງຄືນໂດຍບໍ່ມີການເປີດ;
6. ທຸກໆຊ່ອງປະມູນຕ້ອງມີການຄ້ຳປະກັນດ້ວຍ ແຊັກ (ວິຊ່າ) ຫຼື ໜັງສືຄ້ຳປະກັນອອກໂດຍທະນາຄານ, ຊຶ່ງມີມູນຄ່າຂອງການຄ້ຳປະກັນບໍ່ໃຫ້ຫຼຸດ 2% ຂອງມູນຄາທີ່ສະເໜີປະມູນ.

ດັ່ງນັ້ນ, ຈຶ່ງແຈ້ງເຊີນມາຍັງ ທ່ານ ເຂົ້າຮ່ວມປະມູນການຈັດຊື້ດັ່ງກ່າວ ຕາມທາງຄວນດ້ວຍ.

ຫົວໜ້າກົມ

ນ. ບຸນຍາແສງ ແສງຄຳມີ